# ເອກະສານຂໍ້ເທັດຈິງສຳຄັນກ່ຽວກັບການຢຸດເຊົາການຂັບໄລ່ຂອງ C.D.C

ໃນວັນທີ 3 ເດືອນສິງຫາ ປີ 2021 ສູນຄວບຄຸມພະຍາດຕິດຕໍ່ໄດ້ປະກາດຢຸດເຊົາການຂັບໄລ່ຜູ້ເຊົ່າຈຳນວນຫຼວງຫຼາຍທົ່ວປະເທດ ໃນສະຫະລັດ ອາເມລິກາ ເພື່ອຊ່ວຍປ້ອງກັນການແຜ່ລະບາດຂອງພະຍາດ COVID-19. ຄຳສັ່ງນີ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 3 ເດືອນສິງຫາ ປີ 2021 ເຖິງວັນທີ 3 ເດືອນຕຸລາ ປີ 2021 ສຳລັບຜູ້ເຊົ່າທີ່ອາໄສຢູ່ໃນຄາວຕີ້ທີ່ກຳລັງປະສົບກັບການຕິດເຊື້ອພະຍາດ COVID-19 ຢ່າງຫຼວງຫຼາຍ ຫຼືໃນອັດຕາທີ່ສູງ. ຜູ້ເຊົ່າທີ່ໄດ້ສົ່ງໃບຢັ້ງຢືນພາຍໃຕ້ຄຳສັ່ງຢຸດເຊົາການຂັບໄລ່ຂອງ CDC ສະບັບກ່ອນໜ້ານີ້ ເຊິ່ງໝົດອາຍຸແລ້ວໃນວັນທີ 31 ເດືອນກໍລະກົດ ບໍ່ຈຳເປັນຕ້ອງສົ່ງໃບຢັ້ງຢືນໃໝ່. ຄຳສັ່ງສະບັບນີ້ບໍ່ໄດ້ໃຊ້ແທນ ຫຼືບໍ່ໄດ້ລຶບລ້າງຄຳສັ່ງໃຫ້ຄວາມຄຸ້ມຄອງຈາກການຖືກຂັບໄລ່ຂອງລັດຫຼືຂອງທ້ອງຖິ່ນທີ່ເຂັ້ມແຂງກວ່າທີ່ມີໃຊ້ຢູ່ໃນປະຈຸບັນ ແລະຜູ້ເຊົ່າແລະຜູ້ຊ່ວຍເຫຼືອດ້ານກົດໝາຍຂອງຜູ້ເຊົ່າຄວນສືບຕໍ່ເຮັດວຽກຮ່ວມກັບລັດຖະບານທ້ອງຖິ່ນ, ລັດ ແລະລັດຖະບານກາງເພື່ອໃຫ້ໄດ້ຮັບການຄຸ້ມຄອງທີ່ເຂັ້ມແຂງ. **ລັດຖະສະພາໄດ້ໃຫ້ຄວາມຊ່ວຍເຫຼືອດ້ານຄ່າເຊົ່າແລະຄ່າສາທາລະນູປະໂພກຫຼາຍກວ່າ 40 ພັນລ້ານໂດລາ ຜ່ານລັດແລະຄາວຕີ້ຕ່າງໆ. ກະລຸນາໄປທີ່ https://bit.ly/CFPBERAP ເພື່ອຊອກຫາວິທີການສະໝັກຂໍເອົາຄວາມຊ່ວຍເຫຼືອໃນທ້ອງຖິ່ນຂອງທ່ານ.**

## ສິ່ງທີ່ທ່ານຕ້ອງຮູ້ມີຫຍັງແດ່

- ຄຳສັ່ງນີ້ຄອບຄຸມອະສັງຫາລິມະຊັບສຳລັບໃຫ້ເຊົ່າທັງໝົດ, ລວມທັງເຮືອນສຳລັບຄອບຄົວດ່ຽວ, ເຮືອນເຄື່ອນທີ່ ແລະອະພາດເມັນ ໃນຄາວຕີ້ທີ່ກຳລັງປະສົບກັບການຕິດເຊື້ອພະຍາດ COVID-19 ຢ່າງຫຼວງຫຼາຍ ຫຼືໃນອັດຕາທີ່ສູງ. ຜູ້ເຊົ່າແລະເຈົ້າຂອງເຮືອນສາມາດກວດສອບວ່າເຂົາເຈົ້າຢູ່ໃນທ້ອງຖິ່ນທີ່ໄດ້ຮັບການຄຸ້ມຄອງຫຼືບໍ່ ໄດ້ທີ່ **https://covid.cdc.gov/covid-data-tracker/#county-view**
- ຄຳສັ່ງນີ້ຫ້າມບໍ່ໃຫ້ເຈົ້າຂອງເຮືອນຂັບໄລ່ຜູ້ເຊົ່າທີ່ອາໄສຢູ່ໃນທ້ອງຖິ່ນທີ່ມີສິດໄດ້ຮັບຄວາມຊ່ວຍເຫຼືອ ທີ່ບໍ່ຈ່າຍຄ່າເຊົ່າໄປຈົນເຖິງວັນທີ 3 ເດືອນຕຸລາ ປີ 2021 ຖ້າຜູ້ເຊົ່າໄດ້ຍື່ນໃບຢັ້ງຢືນຂອງ CDC ໃຫ້ແກ່ເຈົ້າຂອງເຮືອນແລ້ວ (ເບິ່ງໃບຢັ້ງຢືນຂ້າງລຸ່ມ).
- ເມື່ອຜູ້ເຊົ່າໄດ້ຍື່ນໃບຢັ້ງຢືນໃຫ້ເຈົ້າຂອງເຮືອນຂອງເຂົາເຈົ້າແລ້ວ, ເຈົ້າຂອງເຮືອນບໍ່ສາມາດດຳເນີນການໃດໜຶ່ງເພື່ອຂັບໄລ່ ຫຼືເຮັດໃຫ້ເກີດການຂັບໄລ່ຜູ້ເຊົ່າຄົນນັ້ນ ຍ້ອນບໍ່ໄດ້ຈ່າຍຄ່າເຊົ່າ ກ່ອນວັນທີ 3 ເດືອນຕຸລາ ປີ 2021 ລວມທັງການດຳເນີນການຕ່າງໆ ເຊັ່ນ ການຂັບໄລ່ຜູ້ເຊົ່າຜ່ານການຮ້ອງຟ້ອງຄະດີ ຫຼືການກໍ່ກວນ ຫຼືການຂົ່ມຂູ່ໃຫ້ຍ້ານກົວເພື່ອໃຫ້ຜູ້ເຊົ່າຍ້າຍອອກຈາກເຮືອນ.
- ຄຳສັ່ງນີ້ບໍ່ໄດ້ຍົກເລີກຫຼືຢຸດເຊົາການເປັນໜີ້ຄ່າເຊົ່າ, ຫຼືຢຸດເຊົາ ໜີ້ຄ່າເຊົ່າທີ່ສະສົມຢູ່ ເຊິ່ງຈະຄົບກຳນົດຈ່າຍຊຳລະພາຍຫຼັງຄຳສັ່ງໝົດອາຍຸ.
- ຄຳສັ່ງນີ້ອະນຸຍາດໃຫ້ຜູ້ເຊົ່າທີ່ມີສິດໄດ້ຮັບຄວາມຊ່ວຍເຫຼືອຖືກຂັບໄລ່ກ່ອນວັນທີ 3 ເດືອນຕຸລາ ປີ 2021 ດ້ວຍເຫດຜົນບາງຢ່າງ ນອກເໜືອຈາກການບໍ່ຈ່າຍຄ່າເຊົ່າ ເຊິ່ງລວມເຖິງ (ເວັ້ນເສຍແຕ່ກົດໝາຍຂອງລັດຫຼືກົດໝາຍທ້ອງຖິ່ນຈະກຳໜົດໃຫ້ມີການຄຸ້ມຄອງ "ການຂັບໄລ່ທີ່ຍຸຕິທຳ") ທີ່ເຂັ້ມແຂງກວ່າ: ກະທຳຄວາມຜິດທາງອາຍາໃນຂະນະທີ່ຢູ່ໃນສະຖານທີ່; ຂົ່ມຂູ່ວ່າຈະເຮັດໃຫ້ເກີດອັນຕະລາຍຕໍ່ສຸຂະພາບຫຼືຄວາມປອດໄພຂອງຜູ້ຢູ່ອາໄສຄົນອື່ນ; ສ້າງຄວາມເສຍຫາຍ ຫຼືກໍ່ໃຫ້ເກີດຄວາມສ່ຽງທີ່ຈະເກີດຄວາມເສຍຫາຍຕໍ່ຊັບສິນຢ່າງຫຼວງຫຼາຍແລະທັນທີ; ລະເມີດກົດລະບຽບໃດໜຶ່ງທີ່ນຳໃຊ້ສຳລັບອາຄານ, ເທສະບັນຍັດກ່ຽວກັບສຸຂະພາບ, ຫຼືກົດລະບຽບທີ່ຄ້າຍຄືກັນກ່ຽວກັບສຸຂະພາບແລະຄວາມປອດໄພ; ຫຼືລະເມີດພັນທະສັນຍາອື່ນໆ, ນອກເໜືອຈາກການຈ່າຍຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບຄ່າເຊົ່າ ຫຼືຄ່າທີ່ພັກອາໄສທີ່ຄ້າຍຄືກັນທັນກຳນົດເວລາ (ລວມທັງການບໍ່ຈ່າຍຄ່າເຊົ່າ ຫຼືຈ່າຍຄ່າທຳນຽມ, ຄ່າປັບໄໝຫຼືດອກເບ້ຍຊ້າ).

## ຂ້າພະເຈົ້າມີສິດຫຼືບໍ່?

ຜູ້ເຊົ່າມີສິດໄດ້ຮັບການຄຸ້ມຄອງຖ້າພວກເຂົາເຈົ້າ:

- ອາໄສຢູ່ໃນຄາວຕີ້ທີ່ CDC ກຳນົດວ່າມີການຕິດເຊື້ອພະຍາດຢ່າງຫຼວງຫຼາຍ ຫຼືໃນອັດຕາທີ່ສູງ: **https://covid.cdc.gov/covid-data-tracker/#county-view**
- ສາມາດຈ່າຍຄ່າເຊົ່າໄດ້ຍ້ອນສູນເສຍລາຍໄດ້ ຫຼືຕ້ອງເສຍຄ່າໃຊ້ຈ່າຍທາງການແພດ
- ຄາດວ່າຈະມີລາຍໄດ້ໜ້ອຍລົງໃນປີ 2021 ແມ່ນຈຳນວນຕໍ່າກວ່າ 99,000 ໂດລາຕໍ່ຄົນ ຫຼື 198,000 ໂດລາຕໍ່ຄອບຄົວ, ຫຼືໄດ້ຮັບເຊັກກະຕຸ້ນເສດຖະກິດ ຫຼືເປັນຜູ້ທີ່ບໍ່ຈຳເປັນຕ້ອງຍື່ນໃບເສຍພາສີປະຈຳປີ 2020
- ພະຍາຍາມ, ຫຼືໄດ້ພະຍາຍາມແລ້ວທີ່ຈະຂໍເອົາເງິນຊ່ວຍເຫຼືອຄ່າເຊົ່າຕ່າງໆຂອງລັດຖະບານທີ່ອາດຈະມີ
- ເຂົ້າໃຈວ່າພວກເຂົາເຈົ້າມີພາລະທີ່ຈະຕ້ອງຈ່າຍຄ່າເຊົ່າຖ້າສາມາດຈ່າຍໄດ້, ລວມທັງຕ້ອງຈ່າຍຄ່າເຊົ່າບາງສ່ວນໂດຍອີງໃສ່ຈຳນວນທີ່ພວກເຂົາເຈົ້າສາມາດຈ່າຍໄດ້
- ຖ້າຖືກໄລ່ອອກຈາກເຮືອນ ຜູ້ເຊົ່າເຮືອນຈະເປັນຄົນບໍ່ມີທີ່ຢູ່ອາໄສ ຫຼືອາດຈະຕ້ອງໄດ້ຍ້າຍໄປຢູ່ໃນສະຖານທີ່ແອອັດຫຼືມີສະພາບຕໍ່າກວ່າມາດຕະຖານໃນການດຳລົງຊີວິດ

ເຊົ່າແລະຜູ້ໃຫຍ່ທຸກຄົນທີ່ອາໄສຢູ່ໃນຄອບຄົວຈະຕ້ອງຍື່ນໃບຢັ້ງຢືນທີ່ເຊັນຊື່ແລ້ວເພື່ອໃຫ້ໄດ້ຮັບການຄຸ້ມຄອງເຫຼົ່ານີ້ (ເບິ່ງຂ້າງລຸ່ມ) ໃຫ້ກັບເຈົ້າຂອງເຮືອນຂອງພວກເຂົາເຈົ້າ ເຊິ່ງລະບຸວ່າພວກເຂົາເຈົ້າມີສິດໄດ້ຮັບການຄຸ້ມຄອງ ແລະພວກເຂົາກຳລັງບອກຄວາມຈິງ ພາຍໃຕ້ການລົງໂທດທາງກົດໝາຍ. ຜູ້ເຊົ່າຄວນເກັບສຳເນົາໃບຢັ້ງຢືນແລະຫຼັກຖານການຕິດຕໍ່ພົວພັນທັງໝົດກັບເຈົ້າຂອງເຮືອນໄວ້.

ການຕີຄວາມຂອງສານກ່ຽວກັບຄຳສັ່ງ CDC ນີ້ບໍ່ຄືກັນໝົດທຸກສານ ແລະການຄຸ້ມຄອງນີ້ອາດຈະບໍ່ສາມາດນຳໃຊ້ໄດ້ກັບເຂດອຳນາດສານໃນບາງເຂດ. ກະລຸນາຕິດຕໍ່ອົງກອນຊ່ວຍເຫຼືອດ້ານກົດໝາຍທ້ອງຖິ່ນຂອງທ່ານຫຼືກຸ່ມຈັດຕັ້ງຊຸມຊົນໃນທ້ອງຖິ່ນຂອງທ່ານເພື່ອຂໍຄວາມຊ່ວຍເຫຼືອດ້ານກົດໝາຍກ່ຽວກັບໃບຢັ້ງຢືນນີ້ ຫຼືຂໍຄວາມຊ່ວຍເຫຼືອໃນກໍລະນີທີ່ທ່ານກຳລັງປະເຊີນກັບການຖືກຂັບໄລ່.

PolicyLink
nhlp NATIONAL HOUSING LAW PROJECT
PARTNERSHIP for Working Families
PUBLIC ADVOCATES MAKING RIGHTS REAL
RIGHT TO THE CITY
PEOPLE'S ACTION INSTITUTE
Alliance for Housing Justice
THE CENTER FOR POPULAR DEMOCRACY
MHAction Manufactured Housing Action
PRRAC Poverty & Race Research Action Council
NATIONAL LOW INCOME HOUSING COALITION